# ລົງຄະແນນສຽງແຕ່ທຳອິດໂດຍໃຊ້ບັດລົງຄະແນນສຽງຂະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້

VOTE 2016

*ທີ່ລັດມິນນີໂຊຕາທ່ານບໍ່ຈຳເປັນຕ້ອງລໍຖ້າຈົນກ່ວາວັນເລືອກຕັ້ງ - ລົງຄະແນນສຽງແຕ່ທຳອິດນີ້ໂດຍໃຊ້ບັດລົງຄະແນນສຽງຂະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້*

## ລົງຄະແນນສຽງແຕ່ທຳອິດໄດ້ດ້ວຍຕົວເອງ

ທ່ານສາມາດລົງຄະແນນໃນບັດລົງຄະແນນສຽງຂະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ທີ່ສຳນັກງານເລືອກຕັ້ງທ້ອງຖິ່ນຂອງທ່ານເລີ່ມຕົ້ນ 46 ມື້ກ່ອນວັນເລືອກຕັ້ງ ໄປທີ່ mnvotes.org ເພື່ອເບິ່ງຊົ່ວໂມງແລະສະຖານທີ່

## ລົງຄະແນນສຽງແຕ່ທຳອິດທາງໄປສະນີ

ທ່ານຍັງສາມາດສະໝັກຂໍຮັບບັດລົງຄະແນນສຽງຂະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ໃຫ້ສົ່ງໃຫ້ທ່ານທາງໄປສະນີ ທ່ານຈະຕ້ອງໄດ້ສົ່ງບັດລົງຄະແນນສຽງຂອງທ່ານຄືນກ່ອນວັນເລືອກຕັ້ງ

① ສະໝັກຂໍຮັບບັດລົງຄະແນນສຽງໄດ້ເວລາໃດກໍໄດ້ໝົດປີທີ່ mnvotes.org ພະນັກງານການເລືອກຕັ້ງຈະສົ່ງເອກກະສານການເລືອກຕັ້ງເມື່ອມີບັດລົງຄະແນນສຽງ (ເບິ່ງຂ້າງຫລັງສຳລັບວັນທີ)

② ອ່ານຄຳແນະນຳທີ່ມາພ້ອມກັບບັດລົງຄະແນນສຽງຂອງທ່ານຢ່າງຄັກແນ່! ບັດລົງຄະແນນສຽງຂອງທ່ານຈະບໍ່ຖືກນັບຖ້າວ່າທ່ານກອກແບບຟອມບໍ່ສົມບູນ.

### ວັນທີຂອງປີ 2016

**ການເລືອກຕັ້ງຂັ້ນຕົ້ນ**
*ວັນອັງຄານ, ວັນທີ 9 ສິງຫາ*

**ລົງຄະແນນສຽງຂະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້**
*ລົງຄະແນນສຽງທາງໄປສະນີ ຫຼື ດ້ວຍຕົວເອງວັນທີ 23 ກັນຍາ ເຖິງ 7 ພຶດສະຈິກາ*

**ລົງທະບຽນເພື່ອລົງຄະແນນສຽງ**
*ລົງທະບຽນລ່ວງໜ້າ ພາຍໃນວັນທີ 18 ຕຸລາ ເພື່ອຊ່ວຍປະຢັດເວລາໃນວັນເລືອກຕັ້ງ*

**ວັນເລືອກຕັ້ງ**
*ວັນອັງຄານ ວັນທີ8 ເດືອນພຶດສະຈິກາ*

③ ທ່ານຈະຕ້ອງມີພະຍານເວລາທີ່ທ່ານລົງຄະແນນສຽງແລະຂຽນບັດລົງຄະແນນສຽງຂອງທ່ານ ພະຍານສາມາດເປັນຜູ້ລົງທະບຽນອອກສຽງເລືອກຕັ້ງຂອງລັດມິນນີໂຊຕາຫຼືຈະເປັນໂນທາຣີກໍໄດ້ ພະຍານຂອງທ່ານຕ້ອງໄດ້ເຊັນຊອງຈົດໝາຍລາຍເຊັນແລະບອກທີ່ຢູ່ຂອງເຂົາເຈົ້ານຳ.

④ ຖ້າວ່າທ່ານບໍ່ໄດ້ລົງທະບຽນເພື່ອລົງຄະແນນສຽງແລ້ວ ທ່ານຈະໄດ້ຮັບຄຳຮ້ອງສະໝັກຈົດທະບຽນໃນເອກກະສານຂອງທ່ານ ຖ້າຈະລົງທະບຽນ ໃຫ້ສະແດງໃຫ້ພະຍານເຫັນບັດປະຈຳຕົວອັນໃດກໍໄດ້ທີ່

*ມີຕໍ່ຂ້າງຫລັງ...*

*ສຳນັກງານລັດຖະມົນຕີ ລັດມິນນີໂຊຕາ*
*mnvotes.org • 1-877-600-VOTE*

# ລົງຄະແນນສຽງແຕ່ທຳອິດໂດຍໃຊ້ບັດລົງຄະແນນສຽງຈະນຶດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້

VOTE 2016

...ຕໍ່ຈາກຂ້າງໜ້າ

ລະບຸໄວ້ໃນຄຳແນະນຳ ພະຍານຂອງທ່ານຕ້ອງໄດ້ໝາຍໃສ່ຊອງຈົດໝາຍລາຍເຊັນຂອງທ່ານວ່າບັດປະຈຳຕົວອັນໃດທີ່ທ່ານສະແດງໃຫ້ເຂົາເຈົ້າເຫັນ.

⑤ ຫຼັງຈາກທີ່ທ່ານໝາຍແລ້ວໆ ໃຫ້ທ່ານສົ່ງບັດລົງຄະແນນສຽງແລະແບບຟອມກັບຄືນມາທັນທີ ບັດລົງຄະແນນສຽງຂອງທ່ານຈະບໍ່ຖືກນັບ ຖ້າວ່າພວກເຮົາໄດ້ຮັບຫຼັງຈາກວັນເລືອກຕັ້ງ ນອກນັ້ນທ່ານຍັງສາມາດສົ່ງບັດລົງຄະແນນສຽງຂອງທ່ານກັບຄືນດ້ວຍຕົວເອງໃຫ້ພະນັກງານການເລືອກຕັ້ງທີ່ສົ່ງບັດລົງຄະແນນສຽງໃຫ້ທ່ານ

## ຕິດຕາມບັດລົງຄະແນນສຽງຂອງທ່ານ

ບັດລົງຄະແນນສຽງຈະນຶດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ທຸກບັດທີ່ໄດ້ຮັບທັນເວລາ ແລະກອກແບບຟອມຢ່າງຖືກຕ້ອງຈະຖືກນັບ ໄປທີ່ mnvotes.org ເພື່ອຕິດຕາມສະຖານະພາບບັດລົງຄະແນນສຽງຈະນຶດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ຂອງທ່ານແລະເພື່ອຢືນຢັນວ່າມັນໄດ້ຮັບແລະຖືກນັບ.

| ວັນທີປີ 2016 | ການເລືອກຕັ້ງຂັ້ນຕົ້ນ | ການເລືອກຕັ້ງທົ່ວໄປ |
|---|---|---|
| ບັດລົງຄະແນນສຽງເລີ່ມຕົ້ນສົ່ງ | ວັນສຸກ ວັນທີ່ 24 ມິຖຸນາ | ວັນສຸກ ວັນທີ່ 23 ກັນຍາ |
| ແນະນຳໃຫ້ທ່ານໄດ້ສະໝັກກ່ອນ | ວັນສຸກ ວັນທີ່ 8 ກໍລະກົດ | ວັນສຸກ ວັນທີ່ 7 ຕຸລາ |
| ວັນທີບັດລົງຄະແນນສຽງຈະຕ້ອງໄດ້ຮັບ | ວັນເລືອກຕັ້ງ ວັນອັງຄານ ວັນທີ່ 9 ສິງຫາ | ວັນເລືອກຕັ້ງ ວັນອັງຄານທີ່ 8 ພຶດສະຈິກາ |

ສຳນັກງານລັດຖະມົນຕີ ລັດມິນນີໂຊຕາ
mnvotes.org • 1-877-600-VOTE

ເດືອນມີນາ 2016